*Journal of Science and Teacher Education (JLSTE), 2*(1), 69-77
**P-ISSN**: 3078-5405; **E-ISSN**: 3080-2628

# ສົ່ງເສີມການນຳໃຊ້ເທັກໂນໂລຊີເຂົ້າໃນການຈັດການຮຽນການສອນໃນສັດຕະວັດທີ 21 ໂດຍໃຊ້ບັນຫາເປັນຖານ (Problem Based Learning ຫຼື PBL) ໃນວິຊາ ICT ພື້ນຖານຫ້ອງພາສາລາວຕໍ່ເນື່ອງ, ວິທະຍາໄລຄູປາກເຊ

*ຊອ ພົງສະຫວັດ  ພົງສຸວັນ**
*ວິທະຍາໄລຄູປາກເຊ*

---


## ບົດຄັດຫຍໍ້

ການຄົ້ນຄວ້າຄັ້ງນີ້ມີຈຸດປະສົງ (1) ເພື່ອສຶກສາຜົນການຮຽນຂອງນັກສຶກສາໃນການຈັດການຮຽນການສອນໃນສັດຕະວັດທີ 21 ໂດຍໃຊ້ບັນຫາເປັນຖານ (Problem Based Learning ຫຼື PBL) ໃນວິຊາ ICT ພື້ນຖານຫ້ອງພາສາລາວຕໍ່ເນື່ອງທີ່ວິທະຍາໄລຄູປາກເຊ ສົກຮຽນ 2023 – 2024. (2) ເພື່ອສຳຫຼວດລະດັບຄວາມຄິດເຫັນຂອງນັກສຶກສາ ຕໍ່ກັບການຈັດການຮຽນການສອນວິຊາ ICT ພື້ນຖານ ໂດຍໃຊ້ບັນຫາເປັນຖານ (Problem Based Learning ຫຼື PBL) ຂອງຫ້ອງພາສາລາວຕໍ່ເນື່ອງທີ່ວິທະຍາໄລຄູປາກເຊ ສົກຮຽນ 2023 – 2024. ກຸ່ມຕົວຢ່າງທີ່ໃຊ້ໃນການວິໄຈຄັ້ງນີ້ແມ່ນນັກສຶກສາປີທີ 1 ຈຳນວນທັງໝົດ 50 ຄົນ , ຍິງ 15  ຄົນ ໂດຍການໃຊ້ເທັກນິກການສຸ່ມການເລືອກແບບສະດວກ ຫ້ອງປະລິນຍາຕີພາສາລາວຕໍ່ເນື່ອງ ວິທະຍາໄລຄູປາກເຊ ໃນສົກຮຽນ 2023 – 2024. ຜົນການວິເຄາະຂໍ້ມູນຂອງແບບທົດສອບຄະແນນສະເລ່ຍພົບວ່າກ່ອນການສອນແມ່ນ  4.80 ແລະ ຫຼັງການສອນແມ່ນ 7.26  ເຊິ່ງຈັດຢູ່ໃນລະດັບດີຂຶ້ນ. ໃນນັ້ນ ຜົນການທົດສອບຜົນການຮຽນກ່ອນການຈັດການຮຽນ - ການສອນຂອງນັກສຶກສາຈຳນວນຫຼາຍກໍ່ຢູ່ໃນຄຸນນະພາບປານກາງ  ເທົ່າກັບ 60.00%  ຮອງລົງມາຜົນການຮຽນແມ່ນຢູ່ໃນລະດັບຄຸນນະພາບ ອ່ອນ ເທົ່າກັບ 36.00 %  ນ້ອຍສຸດແມ່ນຢູ່ໃນລະດັບຄຸນນະພາບດີ ເທົ່າກັບ 4.00%. ແຕ່ຜົນການທົດສອບຫຼັງການຈັດການຮຽນ - ການສອນແບບການ ໂດຍໃຊ້ບັນຫາເປັນຖານ (Problem Based Learning ຫຼື PBL) ເຫັນວ່າ ນັກຮຽນຈຳນວນຫຼາຍກໍ່ຢູ່ໃນຄຸນນະພາບດີ ເທົ່າກັບ 58.00% ຮອງລົງມາຜົນການຮຽນຢູ່ໃນລະດັບຄຸນນະພາບ ປານກາງ ເທົ່າກັບ 26.00 % ແລະ ລະດັບ ດີຫຼາຍ ແມ່ນ 16.00%. ສໍາລັບແນວຄວາມຄິດຂອງນັກສຶກສາຕໍ່ກັບ 6 ດ້ານ ໂດຍລວມແລ້ວແມ່ນຢູ່ໃນລະດັບປານກາງ ແຕ່ພິຈາລະນາເປັນລາຍຂໍ້ພົບວ່າ ດ້ານຄູສອນ, ດ້ານເນື້ອໃນຂອງວິຊາ, ດ້ານຜົນສຳເລັດແມ່ນຢູ່ໃນລະດັບດີຫຼາຍ; ສ່ວນດ້ານນັກສຶກສາ, ດ້ານສື່ການສອນ ແລະ ອຸປະກອນ, ດ້ານກິດຈະກຳແມ່ນຢູ່ໃນລະດັບປານກາງຕາມລຳດັບ.


***ຄຳສັບສຳຄັນ:*** *ເທັກໂນໂລຊີ, ການໃຊ້ປັນຫາເປັນຖານ, ສັດຕະວັດທີ 21, ດ້ານຄູສອນ, ເນື້ອໃນລາຍວິຊາ.*

**ຂໍ້ມູນບົດຄວາມ**

---

**ຕິດຕໍ່ພົວພັນ: ພົງສະຫວັດ  ພົງສຸວັນ; ໂທ: 020 98622589;*
*ອີເມວ: pkonlao299@gmail.com*

Received 30 November 2025
Received in revised form 6 January 2026
Accepted 22 January 2026

This is an open access article under the CC BY license (https://creativecommons.org/licenses/by/4.0/)

**P-ISSN**: 3078-5405; **E-ISSN**: 3080-2628

# The Effects of Problem-Based Learning (PBL) on Promoting Technology Integration in 21st-Century Teaching and Learning: Evidence from a Basic ICT Course at Pakse Teacher Training College

*Phongsavath Phongsouvan**
*Pakse Teacher Training College*

## Abstract

This study aims to (1) study the learning outcomes of students in 21st-century teaching and learning management using Problem-Based Learning (PBL) in the Basic ICT course for the Continuing Lao Language Program at Pakse Teacher Training College, academic year 2023–2024. (2) To survey the level of students' opinions toward the teaching and learning management of the Basic ICT course using Problem-Based Learning (PBL) in the Continuing Lao Language Program at Pakse Teacher Training College, academic year 2023–2024. The sample group used in this study consisted of 50 first-year students, including 15 females, selected through convenience sampling from the Continuing Lao Language Bachelor's Program at Pakse Teacher Training College during the 2023–2024 academic year. The analysis of test score averages revealed that the pre-test mean score was 4.80, while the post-test mean score was 7.26, indicating improvement to a higher level. Before the implementation of the teaching and learning activities, most students' learning achievement was at a moderate level (60.00%), followed by a low level (36.00%), and only 4.00% were at a good level. However, after implementing the Problem-Based Learning (PBL) approach, the results showed that most students achieved a good level (58.00%), followed by a moderate level (26.00%), and 16.00% achieved a very good level. Regarding students' opinions across six aspects, the overall evaluation was at a moderate level. When considered individually, the aspects of the instructor, course content, and learning achievement were rated at a very good level. Meanwhile, the aspects related to students, teaching materials and equipment, and learning activities were rated at a moderate level, respectively.

***Keywords:*** *Technology, problem-based learning, 21st century, teacher aspects, subject content*

**ARTICLE INFO**

**Correspondence: Phongsavath Phongsouvan; Tel: 020 98622589; Email: pkonlao299@gmail.com*

Received 30 November 2025
Received in revised form 6 January 2026
Accepted 22 January 2026

## 1. ພາກສະເໜີ

ການສຶກສາເປັນບັນຫາສຳຄັນຂອງການພັດທະນາຊັບພະຍາກອນມະນຸດໃຫ້ພຽບພ້ອມໄປດ້ວຍຄວາມຮູ້, ຄວາມສາມາດເພື່ອພັດທະນາປະເທດຊາດໃຫ້ຈະເລີນຮຸ່ງເຮືອງ ປັດຈຸບັນນີ້ແມ່ນໄລຍະທີ່ປະເທດຊາດກຳລັງພັດທະນາການສຶກສາໃຫ້ກ້າວໄປສູ່ສາກົນໂດຍເລັງໃສ່ສຶກສາຄົນລຸ້ນໃໝ່ໃຫ້ມີຄວາມຮູ້ຄວາມສາມາດ ແລະ ມີຄວາມຍຸດຕິທຳໃນສັງຄົມເຊັ່ນດຽວກັບການສິດສອນມັນໄດ້ຮຽກຮ້ອງໃຫ້ຄູຕ້ອງໄດ້ນຳໃຊ້ຫຼາຍຮູບແບບທັງປຽບທຽບອັນເກົ່າຍົກໃຫ້ເຫັນອັນໃໝ່ເພື່ອເຮັດໃຫ້ຜູ້ຮຽນມີຄວາມເຂົ້າໃຈຫຼາຍຂຶ້ນກາສຶກສາຈິ່ງມີສ່ວນປະກອບສຳຄັນເຂົ້າໃນການພັດທະນາລະບອບໃໝ່ສັງຄົມນິຍົມ(ກະຊວງສຶກສາທິການ ແຜນພັດທະນາການສຶກສາ ກົມສ້າງຄູ ສູນພັດທະນາຄູ;1985,ໜ້າ 129). ໃນຂະບວນການຮຽນ-ການສອນ ໃນສາທາລະນະລັດປະຊາທິປະໄຕປະຊາຊົນລາວມີຈຸດມຸ້ງໝາຍທີ່ສຳຄັນຄື: ນັກຮຽນເກີດການຮຽນຮູ້ ຫຼື ປ່ຽນແປງພຶດຕິກຳໄປຕາມຈຸດໝາຍການສຶກສາແຫ່ງຊາດຄື: ສ້າງໃຫ້ເດັກໄປຕາມ 5 ຫຼັກມູນການນສຶກສາ ທີ່ກະຊວງສຶກສາໄດ້ກຳນົດໄວ້ຄື: ຄຸນສົມບັດສຶກສາ, ປັນຍາສຶກສາ, ພາລະສຶກາ, ສິລະປະສຶກສາ ແລະ ແຮງງານສຶກສາ ດັ່ງນັ້ນເມື່ອບັນລຸເປົ້າໝາຍດັ່ງກ່າວມັນຈຶ່ງມີຄວາມຈຳເປັນທີ່ສຸດ ໃນຂະບວນການຮຽນການສອນແບບໃໝ່ ເຊິ່ງການຈັດການຮຽນການສອນແບບໃໝ່ ຈະຊ່ວຍໃຫ້ເດັກໄດ້ພັດທະນາຕົນເອງໄປຕາມສັກກະຍະພາບ( ກະຊວງສຶກສາທິການ 2015, ໜ້າ 5-11 ).

ວິຊາ ICT ຖືວ່າເປັນວິຊາຮຽນທີ່ໄດ້ນຳເອົາເນື້ອໃນອັນໃໝ່ ແລະເຮັດເນື້ອໃນສາລະທີ່ພົ້ນເດັ່ນແຕ່ຄາວອາດີດມາຮອດປັດຈຸບັນມາຮັບໃຊ້ໄດ້ຫຼາຍຮູບແບບເພື່ອເປັນຂໍ້ມູນຂ່າວສານເຮັດໃຫ້ນັກຮຽນນັກສາໄດ້ຄົ້ນຄວ້າພິຈາລະນະຮູ້ເຫດຮູ້ຜົນເພື່ອນຳມາສຶກສາຮ່ຳຮຽນ. ອີກດ້ານໜຶ່ງຂະບວນການເຄື່ອນໄຫວດຳລົງຊີວິດຂອງມະນຸດເຮົາໃນບົນໜ້າໂລກໄດ້ມີວິວັດທະນາປ່ຽນແປງໄປເລື້ອຍໆ. ການຂະຫຍາຍຕົວທາງພາສາແລະເສດຖະກິດສັງຄົມ, ວິວັດທະນາການທາງທຳມະຊາດ. ດັ່ງນັ້ນ,ເພື່ອໃຫ້ມີຂໍ້ມູນຂ່າວສານທຽບທັນກັບສະພາບການ, ທັນກັບວິວັດທະນາການ, ວິຊາ ICT ຈິ່ງໄດ້ມີຄວາມສຳຄັນຫຼາຍຕໍ່ກັບການດຳລົງຊີວິດຂອງຄົນເຮົາໃນການຮູ້ຈັກເລື່ອງຂອງຄວາມເປັນມາ, ສິ່ງສຳຄັນກໍຄືຕໍ່ກັບການຮຽນ-ການສອນວິຊາ ICT ເພື່ອໃຫ້ນັກຮຽນໄດ້ມີເອກະສານ

ສຶກສາເຂົ້າໃຈກ່ຽວກັບຂະບວນການວິວັດທາງການສຶກສາ, ເສດຖະກິດ ແລະ  ສັງຄົມ ຂອງມວນມະນຸດ ແລະ ຂະບວນການວິວັດທາງທຳມະຊາດຢູ່ບົນໜ້າໂລກນີ້, ເພື່ອເປັນການເຂົ້າໃຈຕໍ່ກັບການພັດທະນາເສດຖະກິດສັງຄົມ, ການເພີ່ມຂຶ້ນຂອງປະຊາກອນ. ອີກດ້ານໜຶ່ງ, ເອກະສານຕ່າງໆໄດ້ມີເນື້ອໃນກວ້າງຂວາງເລິກເຊິ່ງເໝາະສົມທີ່ຈະໃຫ້ນັກຮຽນນັກສຶກເຮົາໄດ້ສຶກສາຄົ້ນຄວ້າ.

ການຈັດກິດຈະກຳການຮຽນ - ການສອນ ແບບຮ່ວມມືເປັນອີກວິທີການໜຶ່ງທີ່ເໝາະສົມໃນວິຊາປະຫວັດສາດ ເພາະວິທີການຮຽນຮູ້ແບບນີ້ເໝາະກັບລະດັບຄວາມແຕກຕ່າງຂອງນັກຮຽນມີການປະຕິບັດເປັນກຸ່ມຊ່ວຍເຫຼືອເຊິ່ງກັນ ແລະ ກັນເຮັດໃຫ້ຜູ້ຮຽນມີຄວາມກະຕືລືລົ້ນໃນການຮຽນຊ່ວຍໃຫ້ນັກຮຽນເຂົ້າໃຈຄິດໄດ້ໄວ ແລະ ບັນລຸຕາມຈຸດປະສົງ ທັງປະຢັດເວລາ ຜູ້ຮຽນ ແລະ ຜູ້ສອນ ລວມທັງຊ່ວຍໃຫ້ຜູ້ຮຽນຮູ້ໄດ້ຫຼາຍຂຶ້ນ( ວິມົນ ສູນທອນໂລດ: 2006, ໜ້າ 68).

ການຮຽນແບບຮ່ວມມືເປັນວິທີໜຶ່ງທີ່ເຮັດໃຫ້ຜູ້ຮຽນມີຄວາມສົນໃຈ ແລະ ມີແຮງຈູງໃຈໃນການຮຽນມີຄວາມມັກໃນການຮຽນປະຫວັດສາດເນື່ອງຈາກວ່ານັກຮຽນຈະມັກການຮ່ວມກຸ່ມກັບໝູ່ເພື່ອນໂດຍມີການຊ່ວຍເຫຼືອ ເຊິ່ງກັນ ແລະ ກັນໃນກຸ່ມຂອງຕົນເອງໄດ້ມີການສະແດງຄວາມຄິດເຫັນ ແລະ ເປັນທີ່ຍອມຮັບຂອງໝູ່ເພື່ອນ ເຊິ່ງເຮັດໃຫ້ນັກຮຽນທີ່ມີຄວາມແຕກຕ່າງໃນດ້ານການຮຍນເກີດມີຄວາມໝັ້ນໃຈໃນຕົວເອງ ແລະ ມີກຳລັງໃຈທີ່ດີໃນການຮຽນ(ຊານໄຊ ອາຈິນ 1990,ໜ້າ 21. ການຈັດການຮຽນຮູ້ແບບບັນຫາເປັນຖານ(Problem Based Learning ຫຼືPBL) ເປັນຍຸດວິທີໃນການຈັດການຮຽນຮູ້ທີ່ເນັ້ນຜູ້ຮຽນເປັນສຳຄັນແບບໜຶ່ງ ເພື່ອສົ່ງເສີມ ແລະ ພັດທະນາທັກສະການຄິດຢ່າງມີວິຈາລະນະຍານ ແລະ ທັກສະການແກ້ບັນຫາ ແລະ ການຮຽນຮູ້ຢ່າງມີຄວາມໝາຍອີກວິທີໜຶ່ງ ໂດຍຈັດກິດຈະກຳການຮຽນຮູ້ທີ່ໃຊ້ບັນຫາເປັນຖານເປັນຫຼັກຫຼືຈຸດເລີ່ມຕົ້ນເພື່ອກະຕຸ້ນ ຈູງໃຈ ສ້າງຄວາມສົນໃຈເພື່ອຮຽນຮູ້ ແລະ ສ້າງຄວາມຮູ້ດ້ວຍຕົນເອງ ໂດຍບັນຫາເປັນຖານສຳລັບກິດຈະກຳການຮຽນຮູ້ ແລະ ຂະບວນການຮຽນຮູ້ນັ້ນ ເຊິ່ງບັນຫານັ້ນຈະຕ້ອງເປັນບັນຫາທີ່ມາຈາກໂຕຜູ້ຮຽນ ເປັນບັນຫາທີ່ນັກຮຽນສົນໃຈ ຕ້ອງການທີ່ຈະສະແຫວງຫາຄົ້ນຄວ້າຫາຄຳຕອບ ແລະ ຫາເຫດຜົນມາແກ້ບັນຫາ ຫຼືເຮັດໃຫ້ບັນຫານັ້ນຊັດເຈນຈົນແນມເຫັນແນວທາງແກ້ໄຂເຊິ່ງເຮັດມຫ້ເກີດການຮຽນຮູ້ ສາມາດຜະສົມຜະສານຄວາມຮູ້ເພື່ອໄປປະຍຸກໃຊ້ເພື່ອໃຫ້ມີປະສິດທິພາບ ທີ່ສຳຄັນການຈັດການຮຽນຮູ້ແບບໃຊ້ບັນຫາເປັນຖານຈະສົ່ງເສີມການຮຽນຮູ້ຢ່າງກະຕືລືລົ້ນຂອງຜູ້ຮຽນ ການຈັດການຮຽນຮູ້ແບບໃຊ້ບັນຫາເປັນຖານແມ່ນຂະບວນການຂອງການຈັດການການຮຽນຮູ້  ທີ່ເລີ່ມຕົ້ນຈາກບັນຫາຫຼືສະຖານະການທີ່ເກີດຂຶ້ນໂດຍການສ້າງຄວາມຮູ້ຈາກຂະບວນການເຮັດວຽກເປັນກຸ່ມເພື່ອແກ້ໄຂບັນຫາທີ່ກ່ຽວຂ້ອງກັບຊີວິດປະຈຳວັນແລະການມີຄວາມສຳຄັນຂອງນັກຮຽນຕົວບັນຫາຈະເປັນຕົວຕົ້ນຂອງຂະບວນການຮຽນຮູ້ແລະຕົວກະຕຸ້ນສຳລັບການພັດທະນາ. ທັກສະການແກ້ໄຂບັນຫາທີ່ສົມເຫດສົມຜົນແລະຊອກຫາຂໍ້ມູນເພື່ອເຂົ້າໃຈກົນໄກຂອງບັນຫາລວມທັງວິທີການການແກ້ໄຂບັນຫາການຮຽນຮູ້ປະເພດນີ້ແມ່ນສຸມໃສ່ການພັດທະນານັກຮຽນໃນດ້ານທັກສະ ແລະ ຂະບວນການຮຽນຮູ້ແລະການພັດທະນານັກຮຽນໃຫ້ສາມາດຮຽນຮູ້ໂດຍການຊີ້ນຳຕົນເອງເຊິ່ງໃນນັ້ນນັກຮຽນຈະໄດ້ເຝິກຝົນການສ້າງຄວາມຮູ້ໃຫມ່ໂດຍຜ່ານການຂະບວນການຄິດໂດຍການແກ້ໄຂບັນຫາໃຫຍ່ຂອງນັກຮຽນ (ກອງເລຂາສະພາການສຶກສາ, 2007,ໜ້າ 1)ການຮຽນຮູ້ໂດຍໃຊ້ບັນຫາເປັນຖານ(problem bad learning ຫຼື PBL) ເປັນຮູບແບບການ ຮຽນຮູ້ທີ່ໃຫ້ຜູ້ຮ້ຽນສ້າງຄວາມຮູ້ໃຫມ່ຈາກການໃຊ້ບັນຫາທີ່ເກີດຂຶ້ນໃນໂລກແຫ່ງຄວາມເປັນຈິງເປັນບໍລິບົດຂອງການຮຽນຮູ້ເພື່ອໃຫ້ຜູ້ຮຽນເກີດທັກສະໃນການຄິດ ວິເຄາະແລະຄິດແກ້ບັນຫາລວມທັງໄດ້ຄວາມຮູ້ ຕາມສາດໃນສາຂາວິຊາທີ່ຕົນສຶກສາການຮຽນຮູ້ໂດຍໃຊ້ບັນຫາເປັນຖານຈິ່ງເປັນຜົນມາຈາກຂະບວນການ ເຮັດວຽກທີ່ຕ້ອງອາໃສຄວາມເຂົ້າໃຈແລະການແກ້ໄຂບັນຫາເປັນຫຼັກ(ມັດທະນາທຳມະບຸດ 2545,ໜ້າ 12).

ວິທະຍາໄລຄູປາກເຊ ແມ່ນສະຖາບັນການສຶກສາໜຶ່ງໃນ 8 ວິທະຍາໄລຄູທົ່ວປະເທດການຈັດການຮຽນ - ການສອນໃນວິທະຍາໄລຄູປາກເຊຈິ່ງມີຄວາມສຳຄັນ ແລະ ຈຳເປັນຢ່າງຍິ່ງເນື່ອງຈາກວ່າສະຖາບັນມີບົດບາດໃນການຜະລິດຄູອອກຮັບໃຊ້ໃນຊັ້ນປະຖົມ, ມັດທະຍົມ ໃນຂອບເຂດທົ່ວປະທດໃນໄລຍະຜ່ານມາວິທະຍາໄລຄູປາກເຊໄດ້ມີຄວາມພະຍາຍາມພັດທະນາການຮຽນ - ການສອນ ເພື່ອມຸ່ງໄປສູ່ສ້າງຄູໃຫ້ມີຄຸນນະພາບ ໂດຍການໃຊ້ເຕັກນິກ ແລະ ວິທີການສອນຕ່າງໆ ເຂົ້າມາຊ່ວຍໃນການຈັດການຮຽນ -ການສອນ. ດັ່ງນັ້ນຜູ້ຄົ້ນຄວ້າ ຈິ່ງມີຄວາມສົນໃຈໃນຫົວຂໍ້ທີ່ຈະສຶກສາ ສົ່ງເສີມການນຳໃຊ້ເທັກໂນໂລຊີເຂົ້າໃນການຈັດການຮຽນການສອນໃນສັດຕະວັດທີ 21ໂດຍໃຊ້ບັນຫາເປັນຖານ(Problem Based Learning ຫຼື  PBL) ໃນວິຊາ ICT ພື້ນຖານຫ້ອງພາສາລາວຕໍ່ເນື່ອງ ວິທະຍາໄລຄູປາກເຊ ສົກຮຽນ 2023 – 2024ເຊິ່ງຜົນການວິໄຈຄັ້ງນີ້ ຈະເປັນປະໂຫຍດໃນການພັດທະນາການຮຽນ - ການສອນໃຫ້ມີປະສິດທິພາບໂດຍສົ່ງຜົນຕໍ່ຜົນສຳເລັດ ທາງການຮຽນ ແລະ ພັດທະນາຄົນໃຫ້ມີຄວາມສາມາດ

*1.2. ຄຳຖາມຂອງການຄົ້ນຄ້ວາ*

1. ຜົນການຮຽນຂອງນັກສຶກສາໃນການຈັດການຮຽນການສອນໃນສັດຕະວັດທີ 21ໂດຍໃຊ້ບັນຫາເປັນຖານ (Problem Based Learning ຫຼື PBL) ໃນວິຊາ ICT ພື້ນຖານຫ້ອງພາສາລາວຕໍ່ເນື່ອງທີ່ວິທະຍາໄລຄູປາກເຊ ເປັນແນວໃດ?

2. ແນວທາງໃນການສົ່ງເສີມການນາໃຊ້ເທັກໂນໂລຊີເຂົ້າໃນການຈັດການຮຽນການສອນໃນສັດຕະວັດທີ 21ໂດຍໃຊ້ບັນຫາເປັນຖານ(Problem Based Learning ຫຼື PBL) ໃນວິຊາ ICT ພື້ນຖານຫ້ອງພາສາລາວຕໍ່ເນື່ອງ ວິທະຍາໄລຄູປາກເຊມີຄືແນວໃດແດ່?

*1.3.  ຈຸດປະສົງຂອງການຄົ້ນຄ້ວາ*

**P-ISSN**: 3078-5405; **E-ISSN**: 3080-2628

1. ເພື່ອສຶກສາຜົນການຮຽນຂອງນັກສຶກສາໃນການຈັດການຮຽນການສອນໃນສັດຕະວັດທີ 21ໂດຍໃຊ້ບັນຫາເປັນຖານ (Problem Based Learning ຫຼື PBL) ໃນວິຊາ ICT ພື້ນຖານຫ້ອງພາສາລາວຕໍ່ເນື່ອງທີ່ວິທະຍາໄລຄູປາກເຊ ສົກຮຽນ 2023 – 2024.

2. ເພື່ອສຳຫຼວດລະດັບຄວາມຄິດເຫັນຂອງນັກສຶກສາຕໍ່ກັບການຈັດການຮຽນການສອນວິຊາ ICT ພື້ນຖານ ໂດຍໃຊ້ບັນຫາເປັນຖານ (Problem Based Learning ຫຼື PBL) ຂອງຫ້ອງພາສາລາວຕໍ່ເນື່ອງທີ່ວິທະຍາໄລຄູປາກເຊ ສົກຮຽນ 2023 – 2024.

## 2. ບົດຄົ້ນຄວ້າທີ່ກ່ຽວຂ້ອງ

ໃນການສົ່ງເສີມການນຳໃຊ້ເທັກໂນໂລຊີເຂົ້າໃນການຈັດການຮຽນການສອນໃນສັດຕະວັດທີ 21ໂດຍໃຊ້ບັນຫາເປັນຖານ(Problem Based Learning ຫຼື PBL) ໃນວິຊາ ICT ພື້ນຖານຫ້ອງພາສາລາວຕໍ່ເນື່ອງ ວິທະຍາໄລຄູປາກເຊ ສົກຮຽນ 2023 – 2024 ຜູ້ສຶກສາໄດ້ສຶກສາ ງານວິໄຈທີ່ກ່ຽວເພື່ອນຳມາໃຊ້ເປັນແນວທາງດັ່ງນີ້:

ຈິນຕາ ອຸ່ນຈະນຳ ພ້ອມຄະນະ (2024) ການວິໄຈຄັ້ງນີ້ມີຈຸດປະສົງເພື່ອສຶກສາລະດັບການນຳໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານ, ບັນຫາ ແລະ ຄຳແນະນຳສຳລັບການນຳໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານເພື່ອການບໍລິຫານຢູ່ມະຫາວິທະຍາໄລມະຫາມະກຸດຣາຊວິທະຍາໄລ, ວິທະຍາເຂດສີທຳໂສກຣາຊ. ປະຊາກອນເປົ້າໝາຍສຳລັບການສຶກສາແມ່ນບຸກຄະລາກອນ 97 ຄົນ ເຄື່ອງມືຄົ້ນຄວ້າທີ່ໃຊ້ແມ່ນແບບສອບຖາມແບບເປີດ ແລະ ແບບປິດທີ່ມີ IOC ເທົ່າກັບ 1.00 ແລະ ສຳປະສິດອັນຟາຂອງ Cronbach ເທົ່າກັບ .95. ສະຖິຕິທີ່ໃຊ້ສຳລັບການວິເຄາະຂໍ້ມູນລວມມີອັດຕາສ່ວນ, ຄ່າສະເລ່ຍ, ແລະ ຄ່າຜັນປ່ຽນມາດຕະຖານ. ຜົນໄດ້ຮັບສະແດງໃຫ້ເຫັນວ່າ:

1. ການນາໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານໂດຍລວມສຳລັບການບໍລິຫານຢູ່ມະຫາວິທະຍາໄລມະຫາມະກຸດພຸດທະສາສະໜາ, ວິທະຍາເຂດສີທຳໂສກຣະຈັງແມ່ນຢູ່ໃນລະດັບສູງ. ເມື່ອພິຈາລະນາແຕ່ລະດ້ານ, ການບໍລິຫານບຸກຄະລາກອນມີຄ່າສະເລ່ຍສູງສຸດ, ຕິດຕາມມາດ້ວຍການບໍລິຫານງົບປະມານ ແລະ ການບໍລິຫານວິຊາການ, ໂດຍມີຄ່າສະເລ່ຍຕ່ຳສຸດ.

2. ບັນຫາໃນການນາໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານເພື່ອການບໍລິຫານຢູ່ມະຫາວິທະຍາໄລມະຫາມະກຸດພຸດທະສາສະໜາ, ວິທະຍາເຂດສີທຳໂສກຣະຈັງ, ໄດ້ຖືກລະບຸໃນຂົງເຂດການບໍລິຫານວິຊາການ. ການຂາດການນຳໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານໃນການຊີ້ນຳການສອນ:

ການຄຸ້ມຄອງງົບປະມານ: ບໍ່ມີການນຳໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານໃນການປະເມີນຜົນການປະຕິບັດດ້ານການເງິນ ແລະ ການຈັດຊື້.

ການຄຸ້ມຄອງຊັບພະຍາກອນມະນຸດ: ບໍ່ມີການນຳໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານໃນແຜນການ ແລະ ໂຄງການພັດທະນາບຸກຄະລາກອນ.

ການບໍລິຫານທົ່ວໄປ: ບໍ່ມີການພັດທະນາລະບົບເຄືອຂ່າຍຂໍ້ມູນຂ່າວສານ. ຄຳແນະນຳສຳລັບການບໍລິຫານວິຊາການ: ສົ່ງເສີມການນຳໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານໃນການຊີ້ນຳການສອນ.ສົ່ງເສີມການນຳໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານໃນການຄຸ້ມຄອງງົບປະມານ:ສົ່ງເສີມການນຳໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານໃນການປະເມີນຜົນການປະຕິບັດດ້ານການເງິນ ແລະ ການຈັດຊື້. ການຄຸ້ມຄອງຊັບພະຍາກອນມະນຸດ: ສົ່ງເສີມການນຳໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານ.

ວິຊິດ ສຸຣັດເຮືອງໄຊ ພ້ອມຄະນະ ໄດ້ສຶກສາໃນຫົວຂໍ້: ການສຶກສາສະພາບ ແລະ ບັນຫາການຈັດການຮຽນ - ການສອນຂອງອາຈານມະຫາວິທະຍາໄລບູລະພາ ຜົນການວິໄຈພົບວ່າ:

1.ດ້ານສະພາບການຈັດການຮຽນ - ການສອນຂອງອາຈານມະຫາວິທະຍາໄລບູລະພາ ອາຈານສອນມີຄວາມເຫັນວ່າ: ມີການຈັດທຳປະມວນການສອນຄົບທຸກວິຊາ ໃຊ້ວິທີການສອນແບບບັນຍາຍຫຼາຍທີ່ສຸດ, ພຶດຕິກຳການສອນຂອງອາຈານຢູ່ໃນລະດັບດີຫຼາຍ, ຮັບຜິດຊອບຄາບການສອນຄົບຖ້ວນ, ມີການໃຊ້ສື່ການຮຽນ - ການສອນສະໝໍ່າສະເໝີ, ວັດ ແລະ ປະເມີນຜົນ ໂດຍເນັ້ນເນື້ອໃນວິຊາ ແລະ ຂະບວນການຮຽນຮູ້, ມີການປັບປຸງການຮຽນ - ການສອນຢ່າງສະໝໍ່າສະເໝີ ສ່ວນນິສິດນັກສຶກສາມີຄວາມຄິດເຫັນວ່າ: ວິທີສອນທີ່ອາຈານໃຊ້ຫຼາຍທີ່ສຸດໄດ້ແກ່ການສອນແບບບັນຍາຍ, ພຶດຕິກຳການສອນຂອງອາຈານຢູ່ໃນລະດັບດີປານກາງ, ພຶດຕິກຳການສອນທີ່ອາຈານປະຕິບັດຫຼາຍທີ່ສຸດໄດ້ແກ່ການມອບໝາຍໃຫ້ຜູ້ຮຽນສຶກສາຄົ້ນຄວ້າດ້ວຍຕົນເອງ, ມີການໃຊ້ສື່ຢ່າງສະໝໍ່າສະເໝີ, ມີການວັດປະເມີນຜົນການຮຽນ ໂດຍເນັ້ນເນື້ອໃນວິຊາ ແລະ ຂະບວນການຮຽນຮູ້ດ້ວຍແບບທົດສອບຫຼາຍທີ່ສຸດ.

2.ບັນຫາການຈັດການຮຽນ - ການສອນຂອງອາຈານມະຫາວິທະຍາໄລບູລະພາ ອາຈານມີຄວາມເຫັນວ່າ: ບັນຫາການຈັດການຮຽນ - ການສອນທີ່ຫຼາຍທີ່ສຸດໄດ້ແກ່ ມີເວລາກຽມການສອນໜ້ອຍ ເນື່ອງຈາກວ່າວຽກການສອນ ແລະ ວຽກອື່ນໆຫຼາຍເກີນໄປ, ນັກສຶກສາບໍ່ມີຄວາມພ້ອມ, ຂາດຄວາມມຸ່ງໝັ້ນໃນການຮຽນ, ຂາດຄວາມຮັບຜິດຊອບ, ຂາດຄວາມອົດທົນ, ຂາດລະບຽບວິໄນ, ບໍ່ກ້າສະແດງອອກ, ບໍ່ກົງເວລາ, ພື້ນຖານບໍ່ດີ, ອຸປະກອນການສອນປະຈຳຫ້ອງຮຽນບໍ່ພຽງພໍ, ຈຳນວນນັກສຶກສາໃນຊັ້ນຮຽນຫຼາຍເກີນໄປເຮັດໃຫ້ການວັດປະເມີນຜົນໄດ້ຍາກ ແລະ ບໍ່ມີເວລາປັບປຸງການສອນ ເນື່ອງຈາກວຽກການສອນຫຼາຍ ສ່ວນນັກສຶກສາມີຄວາມເຫັນວ່າ: ບັນຫາການດຳເນີນການສອນທີ່ພົບຫຼາຍທີ່ສຸດໄດ້ແກ່ອາຈານຂາດເທັກນິກການສອນ, ຂາດກິດຈະກຳການປະຕິບັດເນັ້ນການບັນຍາຍຫຼາຍເກີນໄປ, ອະທິບາຍບໍ່ຊັດເຈນ ການໃຊ້ແຜ່ນໂປ່ງໃສຂອງອາຈານຕົວໜັງສືນ້ອຍເບິ່ງບໍ່ຄ່ອຍເຫັນ, ປ່ຽນແຜ່ນໂປ່ງໃສໄວເກີນໄປ, ເຄື່ອງສາຍບໍ່ມີຄຸນະພາບ, ບໍ່ມີການ

ວັດປະເມີນຜົນເປັນໄລຍະ, ວັດປະເມີນຜົນຄວາມຈື່ຈໍາຫຼາຍກວ່າການນໍາໄປໃຊ້ ແລະ ບົດສອບເສັງຍາກເກີນໄປ.

ນັດຖາ ສະອະອິບູນ (2011) ສຶກສາສະພາບບັນຫາການຮຽນລາຍວິຊາການອອກແບບພາຍໃນ ສາຂາການອອກແບຄະນະສະຖາປັດຕະຍະກໍາມະສາດ ມະຫາວິທະຍາໄລສີປະທຸມ ປະເທດໄທ, ຈາກຜົນການສຶກສາວິໄຈພົບວ່າ ຄວາມຄິດເຫັນຂອງນັກສຶກສາກ່ຽວກັບສະພາບ ແລະ ບັນຫາການຈັດການຮຽນການສອນໃນລາຍວິຊາພົບວ່ານັກສຶກສາສ່ວນໃຫຍ່ເຫັນວ່າສະພາບການຈັດການຮຽນການສອນໃນພາບລວມມີລະດັບປະຕິບັດການຢູ່ໃນລະດັບຫຼາຍທີ່ສຸດ ທັງນີ້ເມື່ອພິຈາລະນາລາຍດ້ານພົບວ່າໃນດ້ານບຸກຄລິກລັກສະນະຂອງການອາຈານດ້ານການສອນ ແລະ ເຕັກນິກການສອນ ດ້ານການວັດ ແລະ ປະເມີນຜົນ ແລະ ດ້ານສື່ປະກອບການສອນມີການປະຕິບັດໃນລະດັບຄ່າະເລ່ຍຫຼາຍທີ່ສຸດຄືກັນ ຊຶ່ງສອດຄ່ອງກັບຄວາມຄິດເຫັນກ່ຽວກັບບັນຫາໃນການຈັດການຮຽນການສອນທີ່ເຫັນວ່າທຸກດ້ານມີບັນຫາຢູ່ໃນລະດັບນ້ອຍທີ່ສຸດ. ນິດຍາ ຈະເລີນນິເວດນຸກຸນ ໄດ້ປຽບທຽບຜົນສໍາເລັດທາງການຮຽນວິຊາ ວິທະຍາສາດຂອງນັກຮຽນຊັ້ນມັດທະຍົມສຶກສາປີທີ 3 ລະຫວ່າງກຸ່ມທີ່ໃຊ້ວິທີການຮຽນແບບຮ່ວມມືປະເທດການແຂ່ງຂັນລະຫວ່າງກຸ່ມດ້ວຍກຸ່ມທີ່ມີ ແລະ ບໍ່ມີການທົດສອບຍ່ອຍ ຜົນການວິໄຈພົບວ່າ ຜົນສໍາເລັດທາງຮຽນວິຊາ ວິທະຍາສາດຂອງນັກຮຽນຊັ້ນມັດທະຍົມປີທີ 3 ທີ່ວິທີການຮຽນແບບຮ່ວມມືປະເທດ ການແຂ່ງຂັນລະຫວ່າງກຸ່ມດ້ວຍເກມທີ່ບໍ່ມີການທົດສອບຍ່ອຍ ມີຄ່າຜັນປ່ຽນຢູ່ໃນລະດັບ 0.5.

## 3. ວິທີດໍາເນີນການຄົ້ນຄວ້າ

*3.1 ປະຊາກອນ ແລະ ກຸ່ມຕົວຢ່າງ*

ປະຊາກອນແມ່ນນັກສຶກສາປີທີ 1 ຈໍານວນທັງຫມົດ 102 ຄົນ , ຍິງ 56 ຄົນ ຫ້ອງປະລິນຍາຕີພາສາລາວຕໍ່ເນື່ອງ ວິທະຍາໄລຄູປາກເຊ ໃນສົກຮຽນ 2023 – 2024. ກຸ່ມຕົວຢ່າງທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ແມ່ນນັກສຶກສາປີທີ 1 ຈໍານວນທັງຫມົດ 50 ຄົນ, ຍິງ 26 ຄົນ ຫ້ອງປະລິນຍາຕີພາສາລາວຕໍ່ເນື່ອງ ວິທະຍາໄລຄູປາກເຊ ໃນສົກຮຽນ 2023 – 2024 .

*3.2 ເຄື່ອງມືທີ່ໃຊ້ໃນການເກັບກໍາຂໍ້ມູນ*

ເຄື່ອງມືທີ່ໃຊ້ໃນການເກັບກາລວບລວມຂໍ້ມູນໃນການດໍາເນີນການວິໄຈໃນຫົວຂໍ້ : ສົ່ງເສີມການນໍາໃຊ້ເທັກໂນໂລຊີເຂົ້າໃນການຈັດການຮຽນການສອນໃນສັດຕະວັດທີ 21ໂດຍໃຊ້ບັນຫາເປັນຖານ(Problem Based Learning ຫຼື PBL) ໃນວິຊາ ICT ພື້ນຖານຫ້ອງພາສາລາວຕໍ່ເນື່ອງ ວິທະຍາໄລຄູປາກເຊ ສົກຮຽນ 2023 – 2024. ປະກອບມີ : ແຜນການສອນ , ແບບທົດສອບ ແລະ ແບບສອບຖາມ .

*3.2.1. ແບບທົດສອບ*

ແມ່ນເປັນແບບທົດສອບເພື່ອວັດຜົນທາງດ້ານການຮຽນເລື່ອງ : ສົ່ງເສີມການນໍາໃຊ້ເທັກໂນໂລຊີເຂົ້າໃນການຈັດການຮຽນການສອນໃນສັດຕະວັດທີ 21ໂດຍໃຊ້ບັນຫາເປັນຖານ (Problem Based Learning ຫຼື PBL) ໃນວິຊາ ICT ພື້ນຖານຫ້ອງພາສາລາວຕໍ່ເນື່ອງ ວິທະຍາໄລຄູປາກເຊ ສົກຮຽນ 2023 – 2024. ເປັນແບບທົດສອບແບບອັດຕາໄນ ຈໍານວນ 12 ຂໍ້ ເຊິ່ງສອບຫຼັງການສອນຄັ້ງລະ 3 ຂໍ້ແລະຫຼັງວິໄຈຈົບສອບໝົດ12 ຂໍ້ ເຊິ່ງໃຊ້ເວລາໃນການທົດສອບແມ່ນ 2 ຊົ່ວໂມງ .

*3.2.2. ແບບສອບຖາມ*

ແບບສອບຖາມເພື່ອວັດຄວາມສົນໃຈຕໍ່ການຮຽນໃນວິຊາ ICT ພື້ນຖານຫ້ອງພາສາລາວຕໍ່ເນື່ອງ ວິທະຍາໄລຄູປາກເຊ ສົກຮຽນ 2023 – 2024 ເປັນແບບສອບຖາມແບບປະມານຄ່າ 5 ລະດັບ (Rating Scale) ຕາມແນວຄິດຂອງ ( Likert, 1986, P.102) ເຊິ່ງມີຈໍານວນ 17 ຂໍ້ ໃຊ້ເວລາໃນການປະເມີນແບບສອບຖາມ 30 ນາທີ .

ໂດຍແບ່ງອອກເປັນ 6 ດ້ານ ຄື:

1.ດ້ານເນື້ອໃນຂອງວິຊາ ມີ 6 ຕົວຊີ້ວັດ

2.ດ້ານຄູຜູ້ສອນ ມີ 9 ຕົວຊີ້ວັດ

3.ດ້ານນັກສຶກສາ ມີ 9 ຕົວຊີ້ວັດ

4.ສື່ການສອນ ແລະ ອຸປະກອນ ມີ 6 ຕົວຊີ້ວັດ

5.ດ້ານກິດຈະກໍາການຮຽນການສອນ ມີ 6 ຕົວຊີ້ວັດ

6.ດ້ານການວັດ ແລະ ປະເມີນຜົນ ມີ 8 ຕົວຊີ້ວັດ

*3.3 ວິທີເກັບກໍາຂໍ້ມູນ*

ໃນການວິໄຈຄັ້ງນີ້ຜູ້ວິໄຈໄດ້ດໍາເນີນການເກັບກໍາຂໍ້ມູນຕາມຂັ້ນຕອນດັ່ງນີ້ :

1.ຂໍໃຜສະເໜີອະນຸມັດຫົວຂໍ້ ແລະ ໃບສະເໜີເກັບກໍາຂໍ້ມູນຈາກຜູ້ອໍານວຍການວິທະຍາໄລຄູປາກເຊ .

2.ຂຽນໃບສະເໜີຂໍອະນຸຍາດເກັບກໍາຂໍ້ມູນຈາກວິທະຍາໄລຄູປາກເຊ

3.ເຂົ້າພົບຜູ້ອໍານວຍການວິທະຍາໄລຄູປາກເຊເພື່ອແຈ້ງຈຸດປະສົງໃນການເກັບກໍາຂໍ້ມູນ ໃນການວິໄຈຄັ້ງນີ້ .

4.ລົງມືເກັບກໍາຂໍ້ມູນດ້ວຍການນໍາເອົາບົດສອບລົງໄປ. ສອນຄັ້ງທີ 1 , 2 , 3 ແລະ 4 . ແລ້ວປະເມີນການສອນທຸກຄັ້ງຫຼັງສອນຈາກນັ້ນນໍາເອົາແບບທົດສອບ ໄປທົດສອບ ແລະ ແບບສອບຖາມໄປສອບຖາມນັກຮຽນກຸ່ມຕົວຢ່າງຫຼັງການສອນ ຕາມລໍາດັບ

5.ເກັບກໍາລວບລວມຂໍ້ມູນເພື່ອນໍາມາວິເຄາະ .

*3.4 ການວິເຄາະຂໍ້ມູນ*

ປຽບທຽບຜົນຈາກແບບທົດສອບຫຼັງການສອນແຕ່ລະຄັ້ງ ແລະ ຫຼັງການສອນທັງໝົດ ເພື່ອວັດຜົນສໍາເລັດທາງດ້ານການຈັດການຮຽນການສອນໃນລາຍວິຊາ ເລື່ອງ : ສົ່ງເສີມການນໍາໃຊ້ເທັກໂນໂລຊີເຂົ້າໃນການຈັດການຮຽນການສອນໃນສັດຕະວັດທີ 21ໂດຍໃຊ້ບັນຫາເປັນຖານ(Problem Based Learning ຫຼື PBL) ໃນວິຊາ ICT ພື້ນຖານຫ້ອງພາສາລາວຕໍ່ເນື່ອງ ວິທະຍາໄລຄູປາກເຊ ສົກຮຽນ 2023 – 2024.

ປຽບທຽບຜົນການວິເຄາະຂໍ້ມູນຈາກແບບສອບຖາມເພື່ອວັດ ແລະ ປະເມີນຄວາມສົນໃຈຂອງນັກຮຽນໃນການຮຽນ

P-ISSN: 3078-5405; E-ISSN: 3080-2628

ວິຊາກ່ຽວກັບ ເລື່ອງ : ສົ່ງເສີມການນຳໃຊ້ເທັກໂນໂລຊີເຂົ້າໃນການຈັດການຮຽນການສອນໃນສັດຕະວັດທີ 21ໂດຍໃຊ້ບັນຫາເປັນຖານ(Problem Based Learning ຫຼື PBL) ໃນວິຊາ ICT ພື້ນຖານຫ້ອງພາສາລາວຕໍ່ເນື່ອງ ວິທະຍາໄລຄູປາກເຊ ສົກຮຽນ 2023 – 2024.

## 4. ຜົນການຄົ້ນຄວ້າ

ຜ່ານການດຳເນີນການວິໄຈກ່ຽວກັບສົ່ງເສີມການນຳໃຊ້ເທັກໂນໂລຊີເຂົ້າໃນການຈັດການຮຽນການສອນໃນສັດຕະວັດທີ **21**ໂດຍໃຊ້ບັນຫາເປັນຖານ(Problem Based Learning ຫຼື PBL) ໃນວິຊາ ICT ພື້ນຖານຫ້ອງພາສາລາວຕໍ່ເນື່ອງ ວິທະຍາໄລຄູປາກເຊ ສົກຮຽນ 2023 – 2024. ເຊິ່ງຜູ້ວິໄຈໄດ້ຮວບຮວມຂໍ້ມູນ**,** ວິເຄາະຂໍ້ມູນ ແລະ ສະເໜີຜົນການວິເຄາະຂໍ້ມູນໃນ **2** ແບບດັ່ງຕໍ່ໄປນີ້:

*4.1 ຂໍ້ມູນຈາກແບບສອບຖາມ*

ຕາຕະລາງ 1 ຈຳນວນກຸ່ມຕົວຢ່າງ ແຍກຕາມເພດ

| ລ/ດ | ເພດ | Frequency | Percent |
|---|---|---|---|
| 1 | ຊາຍ | 24 | 48 |
| 2 | ຍິງ | 26 | 52 |
| | Total | 50 | 100.0 |

ຈາກຕາຕາລາງທີ 1: ສະແດງໃຫ້ເຫັນວ່າເພດຍິງຫຼາຍກວ່າເພດຍິງຫຼາຍກວ່າເພດຊາຍ, ລວມທັງໝົດມີ 26 ຄົນ ຄິດເປັນຮ້ອຍລະ 52%, ແລະ ເພດຊາຍ ມີ 24 ຄົນ ຄິດເປັນຮ້ອຍ 48%.

ຕາຕະລາງ 2 ຈຳນວນກຸ່ມຕົວຢ່າງ ແຍກຕາມຫ້ອງ

| ລ/ດ | ຫ້ອງ | Frequency | Percent |
|---|---|---|---|
| 1 | ປີ 1 ກ | 25 | 50 |
| 2 | ປີ 1 ຂ | 25 | 50 |
| Total | | 50 | 100.0 |

ຈາກຕາຕະລາງທີ 2 ສະແດງໃຫ້ເຫັນວ່າຫ້ອງປີທີ 1 ກ ມີ 25 ຄົນ ຄິດເປັນຮ້ອຍລະ 50 %, ແລະ ຫ້ອງປີທີ 1 ຂ ມີ 25 ຄົນ ຄິດເປັນຮ້ອຍລະ 50 %.

ຕອນທີ 1: ສະເໜີຜົນການວິເຄາະຂໍ້ມູນ ກ່ອນການຮຽນການສອນ ເລື່ອງ: ສົ່ງເສີມການນຳໃຊ້ເທັກໂນໂລຊີເຂົ້າໃນການຈັດການຮຽນການສອນໃນສັດຕະວັດທີ 21ໂດຍໃຊ້ບັນຫາເປັນຖານ (Problem Based Learning ຫຼື PBL) ໃນວິຊາ ICT ພື້ນຖານຫ້ອງພາສາລາວຕໍ່ເນື່ອງ ວິທະຍາໄລຄູປາກເຊ ສົກຮຽນ 2023 – 2024

*4.2 ແບບທົດສອບຄວາມຮູ້ກ່ອນ ແລະ ຫຼັງການສອນ*

ຕາຕະລາງທີ 3: ອັດຕາສ່ວນຄະແນນເປີເຊັນ ຂອງນັກຮຽນກ່ອນການສອນ.

| ລ/ດ | ກ່ອນການຮຽນ | | ເປີເຊັນ | ແປຜົນ |
|---|---|---|---|---|
| 1 | 0 ຫາ 4 | 18 | 36.00 | ອ່ອນ |
| 2 | 5 ຫາ 6 | 30 | 60.00 | ປານກາງ |
| 3 | 7 ຫາ 8 | 2 | 4.00 | ດີ |
| 4 | 9 ຫາ 10 | 0 | 0.00 | ດີຫຼາຍ |
| ລວມ | | 50 | 100.00 | |

ຈາກຕາຕະລາງທີ 3 ພົບວ່ານັກຮຽນສ່ວນໃຫ່ຍມີຄະແນນເປີເຊັນຫຼາຍ ໃນລະຫວ່າງ 0-4 ເຊິ່ງມີ 18 ຄົນກວມ 36.00% ຮອງລົງມາແມ່ນຢູ່ ໃນລະຫວ່າງ 5-6 ເຊິ່ງມີ 30 ຄົນ ກວມ 60.00% ສ່ວນນັກຮຽນທີ່ຄະແນນເປີເຊັນຕໍ່າສຸດແມ່ນ ຢູ່ 9- 10 ເຊິ່ງມີ 0 ຄົນກວມ **0%**

ຕາຕະລາງທີ 4: ອັດຕາສ່ວນຄະແນນເປີເຊັນ ຂອງນັກຮຽນຫຼັງການສອນ.

| ລ/ດ | ຫຼັງການຮຽນ | | ເປີເຊັນ | ແປຜົນ |
|---|---|---|---|---|
| 1 | 0 ຫາ 4 | 0 | 0.00 | ອ່ອນ |
| 2 | 5 ຫາ 6 | 13 | 26.00 | ປານກາງ |
| 3 | 7 ຫາ 8 | 29 | 58.00 | ດີ |
| 4 | 9 ຫາ 10 | 8 | 16.00 | ດີຫຼາຍ |
| ລວມ | | 50 | 100.00 | |

ຈາກຕາຕະລາງທີ 4 ພົບວ່ານັກຮຽນສ່ວນໃຫ່ຍມີຄະແນນເປີເຊັນຫຼາຍ ໃນລະຫວ່າງ 7-8 ເຊິ່ງມີ 29 ຄົນກວມ 58.00% ຮອງລົງມາແມ່ນຢູ່ ໃນລະຫວ່າງ 5-6 ເຊິ່ງມີ 13 ຄົນ ກວມ 26.00% ສ່ວນນັກຮຽນທີ່ຄະແນນເປີເຊັນຕໍ່າສຸດແມ່ນ ຢູ່ 0-4 ເຊິ່ງມີ 0 %

ຕາຕະລາງ 5 ສະຫຼຸບລວມທຸກດ້ານ

| ລ/ດ | ເນື້ອໃນ | N | Mean | S.D | ຄວາມຄິດເຫັນ |
|---|---|---|---|---|---|
| 1 | ດ້ານເນື້ອໃນຂອງວິຊາ | 50 | 3.58 | 0.86 | ຫຼາຍ |
| 2 | ດ້ານຄູສອນ | 50 | 3.68 | 0.83 | ຫຼາຍ |
| 3 | ດ້ານນັກສຶກສາ | 50 | 3.48 | 0.87 | ກາງ |
| 4 | ດ້ານສື່ການສອນ ແລະ ອຸປະກອນ | 50 | 3.00 | 0.64 | ກາງ |
| 5 | ດ້ານກິດຈະກຳ | 50 | 3.00 | 0.64 | ກາງ |
| 6 | ດ້ານຜົນສຳເລັດ | 50 | 3.51 | 0.76 | ຫຼາຍ |
| ລວມ | | 50 | 3.50 | 0.55 | ຫຼາຍ |

ຈາກຕາຕະລາງທີ 5 ສະແດງໃຫ້ເຫັນວ່າ ຜົນການວິເຄາະສະພາບບັນຫາຂອງນັກຮຽນ 6 ດ້ານ ມີຄ່າສະເລຍລວມ

3.50, ເມື່ອພິຈາລະນາ ຕາມລຳດັບຂອງແຕ່ລະດ້ານແຕ່ຫຼາຍຫາ ນ້ອຍແລ້ວເຫັນວ່າ ດ້ານຄູສອນມີຄ່າສະເລຍ 3.68, ຮອງລົງມາ ແມ່ນ ດ້ານເນື້ອໃນຂອງວິຊາມີຄ່າສະເລຍ 3.58 ແລະ ດ້ານ ຜົນສຳເລັດ ມີຄ່າສະເລຍ 3.51 ຕາມລຳດັບ.

## 5. ອະພິປາຍຜົນ

ຜົນສິ່ງເສີມການນຳໃຊ້ເທັກໂນໂລຊີເຂົ້າໃນການ ຈັດການຮຽນການສອນໃນສັດຕະວັດທີ 21ໂດຍໃຊ້ບັນຫາເປັນ ຖານ(Problem Based Learning ຫຼື PBL) ໃນວິຊາ ICT ພື້ນຖານຫ້ອງພາສາລາວຕໍ່ເນື່ອງ ວິທະຍາໄລຄູປາກເຊ ສົກຮຽນ 2023 – 2024. ພົບວ່າ

1. ດ້ານເນື້ອໃນຂອງວິຊາໂດຍລວມແມ່ນຢູ່ໃນລະດັບດີ ຫຼາຍເນື່ອງຈາກວ່າ ໃນລາຍວິຊາ ICT ເປັນວິຊາທີ່ໜ້າສົນໃຈ ເຮັດ ໃຫ້ເນື້ອໃນມີຄວາມສອດຄ່ອງກັບວິຊາຮຽນ,ວິຊາ ICT ໄດ້ສ້າງ ວິໄສທັດທີ່ກວ້າງໄກ ແລະ ນັກສຶກສາເພີດເພີນ ແລະ ສະນຸກສະ ໜານຕໍ່ການຮຽນວິຊາ ICT ເຊິ່ງ ເຮັດໃຫ້ມີການເຮັດວຽກຮ່ວມ ກັນແລກປ່ຽນຄວາມຄິດເຫັນຊ່ວຍເຫຼືອເຊິ່ງກັນ ແລະ ກັນມີ ຄວາມຮັບຜິດຊອບຊ່ວຍກັນເພື່ອໃຫ້ຕົນເອງ ເຂົ້າໃຈໃນລາຍວິຊາ ແລະ ສາມາຊິກທຸກຄົນໃນກຸ່ມໄດ້ຮັບຜົນສຳເລັດຕາມເປົ້າໝາຍທີ່ ກຳນົດໄວ້ ດັ່ງນັ້ນຍັງໄດ້ເຝິກທັກສະໃນການເຮັດວຽກຮ່ວມກັນ ເປັນກຸ່ມເຊິ່ງໄດ້ສອດຄ່ອງກັບງານວິໄຈ ຣັງສັນ ທອງສຸກນອກ (2545, ໜ້າ 80-82) ໄດ້ເຮັດການວິໄຈກ່ຽວກັບການສ້າງຊຸດ ການຮຽນການສອນທີ່ໃຊ້ບັນຫາເປັນຖານໃນການຮຽນຮູ້ ເລື່ອງ: ທິດສະດີຈຳນວນເບື້ອງຕົ້ນ ລະດັບຊັ້ນມັດທະຍົມສຶກສາປີທີ 4 ແລະ ສຶກສາຜົນການຮຽນຂອງນັກຮຽນຈາກການຮຽນດ້ວຍຊຸດ ການຮຽນການສອນທີ່ໃຊ້ບັນຫາເປັນຖານໃນການຮຽນຮູ້ເລື່ອງ ທິດສະດີຈຳນວນເບື້ອງຕົ້ນ ກຸ່ມຕົວຢ່າງເປັນນັກຮຽນຊັ້ນ ມັດທະຍົມປີທີ4 ໂຮງຮຽນເມືອງ ຄົງ ອາເພີ ຄົງ ນະຄອນລາດ ສະສີມາ ພາກຮຽນທີ2 ປີການສຶກສາ 2546 ຈຳນວນ 15 ຄົນ ທີ່ ໄດ້ຈັດການອາສາສະມັກ ຜູ້ວິໄຈດຳເນີນການສອນໂດຍໃຊ້ຊຸດ ການຮຽນການສອນທີ່ໃຊ້ບັນຫາເປັນຖານໃນການຮຽນຮູ້ເລື່ອງ ທິດສະດີຈຳນວນເບື້ອງຕົ້ນ ລວມເປັນເວລາ 29 ຄາບຮຽນ ຄາບ ຮຽນລະ 60 ນາທີ ຜົນການວິໄຈພົບວ່ານັກຮຽນຊັ້ນມັດທະຍົມ ສຶກສາປີທີ4 ທີ່ຮຽນເລື່ອງທິດສະດີຈຳນວນເບື້ອງຕົ້ນ ໂດຍໃຊ້ຊຸດ ການຮຽນການສອນທີ່ໃຊ້ບັນຫາເປັນຖານໃນການຮຽນຮູ້ ທີ່ຜູ້ ວິໄຈສ້າງຂຶ້ນ ມີຜົນການຮຽນຜ່ານເກນຕັ້ງແຕ່ 60% ຂຶ້ນໄປຂອງ ຄະແນນເຕັມ ເປັນຈຳນວນຫຼາຍກວ່າ 50% ຂອງຈຳນວນ ນັກຮຽນທັງໝົດທີ່ລະດັບຄວາມສຳຄັນ .01

2. ດ້ານຄູຜູ້ສອນ ໂດຍລວມແມ່ນຢູ່ໃນລະດັບດີຫຼາຍ ເນື່ອງຈາກວ່າ ໃນດ້ານຄູສອນນີ້ເຫັນວ່າ ຜູ້ສອນມີຄວາມຮູ້ ຄວາມ ສາມາດດ້ານການສອນ ໂດຍການສອນກຳນົດເນື້ອໃນຂອງແຕ່ລະ ຫົວຂໍ້ສັ້ນກະທັດຮັດ ແລະ ສອດຄ່ອງກັບຫົວຂໍ້,ສອນວິຊາໄດ້ສ້າງ ແຮງຈູງໃຈໃນເວລາຮຽນ ການຈັດການຮຽນການສອນໂດຍຖືເອົາ ຜູ້ຮຽນເປັນໃຈກາງ ແລະການສອນໃນລາຍວິຊາມີຄວາມໝາຍ ຂອງຄຳສັບໄດ້ຢ່າງຈະແຈ້ງຄູສອນເປີດໂອກາດໃຫ້ນັກສຶກສາໄດ້ ສະແດງຄວາມຄິດເຫັນ ເຊິ່ງໄດ້ສອດຄ່ອງກັບງານວິໄຈ ຈິນຕາ ອຸ່ນ ຈະນຳ ພ້ອມຄະນະ (2024) ທີ່ພົບວ່າ ການນຳໃຊ້ເຕັກໂນໂລຊີຂໍ້ ມູນຂ່າວສານໂດຍລວມສຳລັບການບໍລິຫານຢູ່ມະຫາວິທະຍາໄລ ມະຫາມະກຸດພຸດທະສາສະໜາ, ວິທະຍາເຂດສີທຳໂສກຣະຈັງ ແມ່ນຢູ່ໃນລະດັບສູງ. ເມື່ອພິຈາລະນາແຕ່ລະດ້ານ, ການບໍລິຫານ ບຸກຄະລາກອນມີຄ່າສະເລ່ຍສູງສຸດ, ຕິດຕາມມາດ້ວຍການ ບໍລິຫານງົບປະມານ ແລະ ການບໍລິຫານວິຊາການ, ໂດຍມີຄ່າ ສະເລ່ຍຕ່ຳສຸດ. ບັນຫາໃນການນຳໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານ ເພື່ອການບໍລິຫານຢູ່ມະຫາວິທະຍາໄລມະຫາມະກຸດພຸດທະສາສະ ໜາ, ວິທະຍາເຂດສີທຳໂສກຣະຈັງ, ໄດ້ຖືກລະບຸໃນຂົງເຂດການ ບໍລິຫານວິຊາການ. ການຂາດການນຳໃຊ້ເຕັກໂນໂລຊີຂໍ້ມູນ ຂ່າວສານໃນການຊີ້ນຳການສອນ. ບໍ່ມີການນຳໃຊ້ເຕັກໂນໂລຊີຂໍ້ ມູນຂ່າວສານໃນການປະເມີນຜົນການປະຕິບັດດ້ານການເງິນ ແລະ ການຈັດຊື້. ບໍ່ມີການນຳໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານໃນ ແຜນການ ແລະ ໂຄງການພັດທະນາບຸກຄະລາກອນ. ບໍ່ມີການ ພັດທະນາລະບົບເຄືອຂ່າຍຂໍ້ມູນຂ່າວສານ.

3. ດ້ານນັກສຶກສາໂດຍລວມແມ່ນຢູ່ໃນລະດັບດີປານ ກາງ ເນື່ອງຈາກວ່າໃນດ້ານນັກສຶກສານັ້ນ ນັກສຶກສາຍັງບໍ່ເຂົ້າ ເຂົ້າໃຈເຫດການທີ່ກ່ຽວຂ້ອງກັບການນຳໃຊ້ຂໍ້ມູນດ້ານ ICT ໃນ ປັດຈຸບັນໄດ້ເທົ່າທີຄວນ ນັກສຶກສາ ຍັງບໍ່ເຂົ້າໃຈລາຍລະອຽດ ຕ່າງໆ.

4. ດ້ານສື່ການຮຽນການສອນ ແລະ ອຸປະກອນ ໂດຍລວມແມ່ນຢູ່ໃນລະດັບດີປານກາງ ຫ້ອງສະໝຸດບໍ່ມີ ເອກະສານທີ່ຫຼາກຫຼາຍທີ່ກົງກັບຂໍ້ມູນຕາມຄວາມຕ້ອງການ ແລະ ຄູບໍ່ຄ່ອຍມີການປັບປຸງສື່ການສອນ ສຳລັບການໃຫ້ບໍລິການ Internet ສຳລັບການຄົ້ນຫາຂໍ້ມູນນັ້ນຍັງບໍ່ທັນກວ້າງຂວາງເທື່ອ ເຊິ່ງໄດ້ສອດຄ່ອງກັບງານວິໄຈ ນັດຖາ ສະອະວິບູນ (2011) ສຶກ ສາສະພາບບັນຫາການຮຽນລາຍວິຊາການອອກແບບພາຍໃນ ສາຂາການອອກແບ ຄະນະສະຖາປັດຕະຍະກຳມະສາດ ມະຫາວິທະຍາໄລສີປະທຸມ ປະເທດໄທ, ຈາກຜົນການສຶກສາ ວິໄຈພົບວ່າ ຄວາມຄິດເຫັນຂອງນັກສຶກສາກ່ຽວກັບສະພາບ ແລະ ບັນຫາການຈັດການຮຽນການສອນໃນລາຍວິຊາພົບວ່ານັກສຶກສາ ສ່ວນໃຫຍ່ເຫັນວ່າສະພາບການຈັດການຮຽນການສອນໃນ ພາບລວມມີລະດັບປະຕິບັດການຢູ່ໃນລະດັບຫຼາຍທີ່ສຸດ ທັງນີ້ ເມື່ອພິຈາລະນາລາຍດ້ານພົບວ່າໃນດ້ານບຸກຄລິກລັກສະນະຂອງ ການອາຈານດ້ານການສອນ ແລະ ເຕັກນິກການສອນ ດ້ານການ ວັດ ແລະ ປະເມີນຜົນ ແລະ ດ້ານສື່ປະກອບການສອນມີການ ປະຕິບັດໃນລະດັບຄ່າະເລ່ຍຫຼາຍທີ່ສຸດຄືກັນ ຊຶ່ງສອດຄ່ອງກັບ ຄວາມຄິດເຫັນກ່ຽວກັບບັນຫາໃນການຈັດການຮຽນການສອນທີ່ ເຫັນວ່າທຸກດ້ານມີບັນຫາຢູ່ໃນລະດັບນ້ອຍທີ່ສຸດ.

5. ດ້ານກິດຈະກຳ ໂດຍລວມແມ່ນຢູ່ໃນລະດັບດີປານ ກາງ ເນື່ອງຈາກວ່າໃນດ້ານນັກສຶກສານັ້ນຍັງມີສ່ວນຮ່ວມການຈັດ ກິດຈະກຳເປັນລາຍບຸກຄົນ (ຖາມ-ຕອບ) ໜ່ອຍມີການໄປ ທັດສະນະສຶກສາສະຖານທີ່ກ່ຽວຂ້ອງກັບລາຍວິຊາມີການ

ເຝິກອົບຮົມລາຍວິຊາ ເຮັດໃຫ້ມີບັນຍາກາດໃນການຮຽນ-ການສອນ ແລະ ມີຄວາມສຸກເຊິ່ງໄດ້ສອດຄ່ອງກັບງານວິໄຈ

6. ດ້ານຜົນສາເລັດໂດຍລວມແມ່ນຢູ່ໃນລະດັບດີຫຼາຍ ເນື່ອງຈາກວ່າມີການນຳໃຊ້ວິທີການວັດຜົນ ແລະ ປະເມີນຜົນທີ່ຫຼາກຫຼາຍຮູບແບບ ແລະ ບໍ່ມີການວັດຜົນ ແລະ ປະເມີນຜົນກ່ອນ ແລະ ຫຼັງຮຽນ ມີການວັດ ແລະ ປະເມີນຜົນການຮຽນການສອນຕອນທ້າຍຊົ່ວໂມງ ແລະ ຍັງມີການແນະນຳລາຍລະອຽດຂອງຂັ້ນຕອນ ແລະ ວິທີການສອບເສັງໜ້ອຍເຊິ່ງໄດ້ສອດຄ່ອງກັບງານວິໄຈ ນິດຍາ ຈະເລີນນິເວດນຸກູນ ໄດ້ປຽບທຽບຜົນສຳເລັດທາງການຮຽນວິຊາ ວິທະຍາສາດຂອງນັກຮຽນຊັ້ນມັດທະຍົມສຶກສາປີທີ 3 ລະຫວ່າງກຸ່ມທີ່ໃຊ້ວິທີການຮຽນແບບຮ່ວມມືປະເພດການແຂ່ງຂັນລະຫວ່າງກຸ່ມດ້ວຍກຸ່ມທີ່ມີ ແລະ ບໍ່ມີການທົດສອບຍ່ອຍ ຜົນການວິໄຈພົບວ່າ ຜົນສຳເລັດທາງຮຽນວິຊາ ວິທະຍາສາດຂອງນັກຮຽນຊັ້ນມັດທະຍົມປີທີ 3 ທີ່ວິທີການຮຽນແບບຮ່ວມມືປະເພດ ການແຂ່ງຂັນລະຫວ່າງກຸ່ມດ້ວຍເກມທີ່ບໍ່ມີການທົດສອບຍ່ອຍ ມີຄ່າຜັນປ່ຽນຢູ່ໃນລະດັບ 0.5

## 6. ສະຫຼຸບຜົນ

ຜົນການຄົ້ນຄວ້າພົບວ່າການທົດສອບຜົນການຮຽນກ່ອນການຈັດການຮຽນ - ການສອນຂອງນັກສຶກສາຈຳນວນຫຼາຍກໍ່ຢູ່ໃນລະດັບປານກາງ ສ່ວນຜົນການທົດສອບຫຼັງການຈັດການຮຽນ - ການສອນໂດຍໃຊ້ບັນຫາເປັນຖານ (Problem Based Learning ຫຼື PBL) ໃນວິຊາ ICT ພື້ນຖານຫ້ອງພາສາລາວຕໍ່ເນື່ອງ ວິທະຍາໄລຄູປາກເຊແມ່ນຢູ່ໃນລະດັບດີ ບໍ່ວ່າຈະເປັນດ້ານຄູສອນ ແລະ ດ້ານເນື້ອໃນຂອງວິຊາ. ສ່ວນດ້ານຜົນສຳເລັດແມ່ນຢູ່ໃນລະດັບດີຫຼາຍ ແລະ ດ້ານນັກສຶກສາ, ດ້ານສື່ການສອນ - ອຸປະກອນ ແລະ ດ້ານກິດຈະກຳແມ່ນຢູ່ໃນລະດັບດີປານກາງຕາມລຳດັບ.

## 7. ຂໍ້ສະເໜີແນະ

1. ຄວນມີຫ້ອງຄອມພິວເຕີໃຫ້ພຽງພໍຕໍ່ການຈັດການຮຽນການສອນໃນລາຍວິຊາ ICT.
2. ການນຳໃຊ້ Internet ຍັງມີຂໍ້ຈຳກັດໃນຫຼາຍດ້ານ

## 8. ຂໍ້ຈຳກັດຂອງການຄົ້ນຄ້ວາ

ໃນການສຶກສາຄັ້ງນີ້:

1. ການໃຫ້ຄວາມຮ່ວມມືໃນການໃຫ້ຂໍ້ມູນຂອງນັກສຶກສາບາງຄົນຍັງມີຂໍ້ຈຳກັດ.
2. ບາງດ້ານນັກສຶກສາບາງຄົນຍັງຂາດຄວາມໃຈໃສ່

## 9. ເອກະສານອ້າງອີງ

ກະຊວງສຶກສາທິການ ແລະ ກິລາ. (2008). *ຫຼັກການສອນມັດທະຍົມຕົ້ນ1.* ພິມຄັ້ງທີ1. Nhan Dan printing houses HCMC.

ພູຂັນ ທອງສະໝຸດ. (2013). *ການນຳໃຊ້ຄຳຖາມເຂົ້າໃນການຮຽນ - ການສອນ ວິຊາປະຫວັດສາດ ຊັ້ນມ4ມັດທະຍົມຕົ້ນບ້ານກາງເມືອງປາກເຊ ແຂວງຈຳປາສັກ ສົກຮຽນ 2012 – 2013*, ວິທະຍາໄລຄູປາກເຊ.

ພະແນກສຶກສາທິການ ແລະ ກິລາ ແຂວງຈຳປາສັກ. (2014). *ບົດສະຫຼຸບປະຈຳພາກຮຽນທີ I ຂອງໂຮງຮຽນມັດທະຍົມສົມບູນດອນຕະລາດ ເມືອງຈຳປາສັກ ແຂວງຈຳປາສັກ.* ພິມທີ່ ແຂວງຈຳປາສັກ.

ວົງພະຈັນ ໄຊຍະແສງ (2010). *ສຶກສາສະພາບການຮຽນ - ການສອນ ວິຊາວັນນະຄະດີພື້ນເມືອງລາວ ຊັ້ນ ມ4 ມັດທະຍົມສົມບູນສະໜາມໄຊ ເມືອງສະໜາມໄຊ ແຂວງອັດຕະປື ສົກຮຽນ2009 – 2010ໃນ2ດ້ານຄື:ດ້ານຄວາມຮູ້ກ່ຽວກັບຫຼັກສູດຊັ້ນມ4ແລະດ້ານຄວາມຮູ້ກ່ຽວກັບການຮຽນ.* ວິທະຍາໄລຄູປາກເຊ.

ຣສ.ສະເຫຼີມສັກ ພາບຸດດີ. *ວິທີສອນປະຫວັດສາດ,* ສຳລັບນັກສຶກປະລິນຍາຕີ ຄູປະຫວັດສາດ, ພາກວິຊາຫຼັກສູດ ແລະ ວິທີສອນ ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ , 2001.

ສົມຍົດ ແຊ່ໂຕ່. (2555). *ສະພາບບັນຫາການຈັດການຮຽນການສອນວິຊາສຶກສາພົນລະເມືອງໃນເຄືອຄາຍໂຮງຮຽນຣາຊະວິນິດ,*ປະເທດໄທ.

ພອນກະມົນ ຈັນຊີ. (2543). *ບັນຫາການຈັດການຮຽນ-ການສອນວິຊາປະຫວັດສາດໄທໃນລະດັບມັດທະຍົມສຶກສາຕອນຕົ້ນ* ,ກົມສາມັນສຶກສາ, 2001.

ຜູ້ຊ່ວຍສາດສະດາຈານຮຸ່ງການ ໃຈວົງຍະ. (2014). *ສຶກສາສະພາບ ແລະ ບັນຫາການຈັດການຮຽນການສອນລາຍວິຊາ ສຕ. 301* ຫຼັກສະຖິຕິ, ຄະນະວິທະຍາສາດ ມະຫາວິທະຍາໄລແມ່ໂຈ້ ປະເທດໄທ.

ພິມພອນ ຟອງຫຼ້າ. (2554). *ສະພາບບັນຫາການຈັດການຮຽນການສອນ ລາຍວິຊາ ຄະນິດສາດທົ່ວໄປ ສຳນັກວິທະຍບໍລິການທົ່ວໄປ ມ. ສີປະທຸມ*

**P-ISSN**: 3078-5405; **E-ISSN**: 3080-2628

ນັດຖາ ສະອະວິບູນ. (2011). *ສຶກສາສະພາບບັນຫາການຮຽນລາຍວິຊາການອອກແບບພາຍໃນ ສາຂາການອອກແບ ຄະນະສະຖາປັດຕະຍະກຳມະສາດ ມະຫາວິທະຍາໄລສີປະທຸມ ປະເທດໄທ, 2011. ບັນຫາການຮຽນການສອນວິຊາປະຫວັດ,* ມະຫາວິທະຍາໄລລາຊະພັດສົງຂາ, ປະເທດໄທ.

ພູຂັນ ໄຊຍະສິງ. ( 2553). *ຊຸດການສອນການຂຽນເຊື້ອສ້າງສັນວິຊາພາສາລາວ ຊັ້ນປະຖົມປີທີ 3 ປະຖົມສາທິດ ເມືອງປາກເຊ ແຂວງຈຳປາສັກ.* ມະຫາວິທະຍາໄລບູລະພາ ຈັງຫວັດຊົນບູລີ. ປະເທດໄທ.

ມີນາພອນ ຄຳພູມີ ແລະ ຈັນທະຄານ ຈັນທະລາສີ. (2014). *ຊຸດການສອນພາສາອັງກິດ ມັດທະຍົມສົມບູນຂັ້ນກາ ເມືອງ ໂຂງ ແຂວງຈຳປາສັກສົກຮຽນ2013-2014.*ພິມທີ: ພິມທີ: ວິທະໄລຄູປາກເຊ.

ຣະພິນ ໂພສີ. (2547). *ຄວາມໝາຍຂອງຊຸດການສອນ.* (8 ທັນວາ 2014). ຄົ້ນມາຈາກ: http://www.nana-bio.com.

ລາວັນພິນເກົ້ລາ. (2533). *ຫຼັກການສ້າງຊຸດການສອນ.* (8 ທັນວາ 2014). ຄົ້ນມາຈາກ: http://www.nana-bio.com.